# ບົດທີ 22

# ພະເຢຊູກັບນີໂກເດມ



*ໃນບົດຮຽນນີ້ ເຮົາຈະຮຽນເລື່ອງເຫດການໜຶ່ງໃນສະໄໝປີທີ່ ພະເຢຊູ ຕຽມຕົວ ໄປປ່າວປະກາດພະທຳ. ເຫດການນີ້ມີແຕ່ຂ່າວປະເສີດໂຢຮັນ ບັນທຶກໄວ້.*

*ຢ່າລືມອ້ອນວອນຂໍໃຫ້ ພະເຈົ້າ ຊ່ວຍໃຫ້ຮຽນເຂົ້າໃຈໄດ້ດີ*

**1** ໃນລາຍຊື່ຕໍ່ໄປນີ້ ມີເຫດການຈາກສະໄໝທີ່ພະອົງຕຽມຕົວ 9 ປະການ. ໃຫ້ທ່ານໝາຍ 6 ປະການທີ່ເຫັນໃນຂ່າວ ປະເສີດ ໂຢຮັນ? (ເປີດເບິ່ງໃນພະຄຳພີກໍ່ໄດ້ ໃນແຕ່ລະເຫດການນັ້ນຈະມີຄວາມສຳຄັນທີ່ຂີດເສັ້ນກ້ອງດ້ວຍສໍສີຂຽວໄວ້ໃນເມື່ອກ່ອນແລ້ວ)

ກ. ຄຳເທດສະໜາຂອງ ໂຢຮັນບັບຕິສະໂຕ.

ຂ. ພະເຢຊູ ຮັບບັບຕິສະມາ.

ຄ. ການທົດລອງຂອງ ພະເຢຊູ.

ງ. ສາວົກໝວດທຳອິດ.

ຈ. ການສົມລົດຢູ່ ການາ.

ສ. ພະອົງຊົງຊຳລະພະວິຫານ (ເທື່ອແລກ)

ຊ. ເລື່ອງ ນີໂກເດມ.

ຍ. ຍິງຊາວຊາມາເລຍ.

ດ. ພະອົງໂຜດໃຫ້ລູກຊາຍເຈົ້ານາຍໃຫ້ດີ.

**2** ໃນບົດຮຽນນີ້ເຮົາຈະຮຽນເລື່ອງເຫດການອັນໜຶ່ງຈາກຂ່າວປະເສີດ ໂຢຮັນ. ທັງ 6 ປະການຢູ່ໃນຂ່າວປະເສີດ ໂຢ ຮັນນັ້ນຢູ່ໃນສະໄໝປີໃດ? ______________________________

**3** ອີກຢ່າງໜຶ່ງໃນບົດນີ້ເຮົາຈະຝຶກໃນການໃຊ້ ວິທີສຶກສາພະຄຳພີ 4 ຢ່າງຄືນອີກຄື:

ດ້ວຍວິທີສັງເກດ. ດ້ວຍວິທີນຳມາໃຊ້.

ດ້ວຍວິທີອະທິບາຍ. ດ້ວຍວິທີປຽບທຽບ.

ໃຫ້ທ່ານເລືອກເອົາວິທີຮຽນທີ່ມີຢູ່ຂ້າງເທິງນັ້ນມາຂຽນໃສ່ບ່ອນວ່າງໃຫ້ຖືກກັບປະໂຫຍກຄຳເວົ້າລຸ່ມນີ້:

ກ. _________________________ ແມ່ນ ສຶກສາເລື່ອງທີ່ພົວພັນກັນຫຼາຍບ່ອນໃນພະຄຳພີ.

ຂ. _________________________ ແມ່ນ ຈັບເອົາຈຸດສຳຄັນໃນຕອນພະຄຳພີຕອນ ໜຶ່ງ.

ຄ. _________________________ ແມ່ນຊອກຫາວິທີທາງຍົກຄວາມຈິງໃນພະຄຳພີມາເປັນປະໂຫຍດໃນຊີວິດປະຈຳວັນ

ງ. _________________________ ແມ່ນ ຕີຄວາມໝາຍໃນຕອນທີ່ບໍ່ແຈ້ງດີ.

*ຂໍໃຫ້ທ່ານອ່ານເຫດການທີ່ຈະສຶກສາຕໍ່ໄປນີ້ຈາກ ໂຢຮັນ 2:23 ເຖິງ 3:15*

**4** ໃຫ້ເຮົາຕັ້ງຕົ້ນດ້ວຍວິທີຮຽນທີ່ອາດຈະງ່າຍກວ່າໝູ່ຄືວິທີໃດ? ____________________

ຕອບ:

***1*** *ງ. ຈ. ສ. ຊ. ຍ. ແລະ ດ.ຖືກ.*

***2*** *ປີທີ່ຕຽມຕົວ.*

***3*** *ກ. ປຽບທຽບ. ຂ. ສັງເກດ. ຄ. ນຳມາໃຊ້. ງ. ອະທິບາຍ.*

***4*** *ສັງເກດ.*

**5** ເພື່ອຈະໃຫ້ເຮົາຮູ້ຈັກເຫດການນີ້ຢ່າງຄົບຖ້ວນເຮົາຈະສະເໜີຄຳຖາມຄື:

ຜູ້ໃດ? ເວລາໃດ? ໃນບ່ອນໃດ? ຢ່າງໃດ?

ໃຫ້ທ່ານຕອບຄຳຖາມດັ່ງຕໍ່ໄປນີ້ ເພື່ອຈະຮຽນດ້ວຍວິທີສັງເກດ.

ກ. ຜູ້ໃດມາຫາ ພະເຢຊູ ໃນ ໂຢຮັນ 3:1? ________________________________

ຂ. ມາຫາເວລາເທສະການໃດ? (ຢຮ 2:23) ______________________________

ຄ. ມາຫາໃນເວລາຍາມໃດ? (ຢຮ 3:2) __________________________________

ງ. ເຫດການນີ້ເກີດຂຶ້ນໃນກຸງໃດ? (ຢຮ 2:23) _____________________________

ຈ. ເຮົາຮູ້ຢ່າງໃດເລື່ອງເພິ່ນ? ເພິ່ນຢູ່ກັບພວກໃດ? (ຢຮ 3:1) __________________

ເປັນເຈົ້ານາຍຊາດໃດ? (ຢຮ 3:1) ________________

ມີຕຳແໜ່ງໃດ? (ຢຮ 3:10) ____________________

ສ. ເຂົາເວົ້າເລື່ອງຢ່າງໃດ? (ຂໍ້ 3 ແລະ 5) ລາຊະແຜ່ນ ____________ (ຕື່ມຄວາມທີ່ຂາດ)

ຊ. ເພື່ອເຂົ້າໃນແຜ່ນດິນຕ້ອງບັງເກີດຢ່າງໃດ? (ຂໍ້ 3, 6, 7) ______________________

ຍ. ນີໂກເດມຖາມ ພະເຢຊູ ເລື່ອງການບັງເກີດໃໝ່ຢ່າງໃດ? (ຂໍ້ 9) ________________

______________________________________________________________

**6** ບັດນີ້ເຮົາຈະທວນຄືນດ້ວຍຕື່ມຄວາມທີ່ຂາດຕໍ່ໄປນີ້: (ຕື່ມຄວາມທີ່ຂາດ)

ກ. ພະເຢຊູ ຢູ່ໃນກຸງ ____________________________________________

ຂ. ໃນເວລາເທສະການ ___________________________________________

ຄ. ມີຄົນຊື່ວ່າ ________________________________________________

ງ. ມາຫາພະອົງໃນເວລາກາງ _______________________________________

ຈ. ຄົນນັ້ນຢູ່ກັບພວກ ____________________________________________

ສ. ແລະເປັນເຈົ້າ_______________________________________ ໃນພວກຄົນຢິວ.

ຊ. ເພິ່ນສົນທະນາກັບ ພະເຢຊູ ເລື່ອງການບັງ _______________________________

ຍ. ເພື່ອຈະເຂົ້າໃນ __________________________ ຂອງ ____________________

ດ. ແຕ່ທີວທີ ນີໂກເດມ ບໍ່ເຂົ້າໃຈດີເລື່ອງການບັງ ______________________________

ຕ. ພະເຢຊູປະຫຼາດໃຈທີ່ຜູ້ມີຕຳແນ່ງເປັນ ________________ ຂອງພວກ ອິສະລາແອນ ຍັງບໍ່ຮູ້ປານນັ້ນ.

ຕອບ:

**5** *ກ. ນີໂກເດມ. ຂ. ປັດສະຄາ. ຄ. ກາງຄືນ. ງ. ເຢລູຊາເລັມ.*

*ຈ. ຟາລີ ຢິວ... ຊາຍ... ອາຈານ ສ. ລາຊະແຜ່ນດິນ. ຊ. ໃໝ່*

*ຍ. ເຫດການເຫຼົ່ານີ້ຈະບັງເກີດຂຶ້ນໄດ້ຢ່າງໃດ?*

**6** *ກ. ເຢລູຊາເລັມ. ຂ. ປັດສະຄາ. ຄ. ນີໂກເດມ. ງ. ຄືນ. ຈ. ຟາລິຊາຍ.*

*ສ. ນາຍ. ຊ. ເກີດໃໝ່ ຍ. ລາຊະແຜ່ນດິນ...ພະເຈົາ. ດ. ເກີດໃໝ່.*

*ຕ. ອາຈານ*

*ມາເຖິງນີ້ເຮົາສັງເກດຮູ້ຈຸດສຳຄັນໃນເລື່ອງນີ້ແລ້ວ ແຕ່ຍັງມີບາງສິ່ງທີ່ຈະຕ້ອງອະທິບາຍ.*

**7** ຫຼັງຈາກເຮົາຊອກຫາຈຸດສຳຄັນແລ້ວເຮົາເລີຍໄປຮຽນດ້ວຍວິທີຮຽນທີ່ ສອງຄືວິທີໃດ? _____

**8** ໃນວິທີອະທິບາຍນີ້ ເຮົາຮຽນໂດຍສະເໜີຄຳຖາມອີກຄື:
ໝາຍຄວາມວ່າຢ່າງໃດ? ແມ່ນເພາະເຫດໃດ? (ຫຼືເປັນເພາະຫຍັງ? ກໍ່ໄດ້)
ຍົກຕົວຢ່າງເຮົາອາດຈະຖາມຢ່າງນີ້ໄດ້.
"ການບັງເກີດໃໝ່" ໝາຍຄວາມວ່າຢ່າງໃດ? ໃຫ້ເລືອກ ໝາຍເອົາຂໍ້ທີ່ຖືກ.
ກ. ຄ່ອຍຮຽນຮູ້ດຳເນີນຊີວິດດີກວ່າເກົ່າ. ຂ. ເລີ້ມຕົ້ນປ່ຽນແປງຊີວິດໃໝ່.
ຄ. ຂັບຕາມພະບັນຍັດ.

**9** ກັບໄປຄິດເລື່ອງເຫດການນີ້ໃນຂ່າວປະເສີດ ໂຢຮັນ ອີກ. ອ່ານຂໍ້ 4
ກ. ນີໂກເດມ ເຂົ້າໃຈຄວາມໝາຍຂອງການບັງເກີດໃໝ່ບໍ່? ______________________
ຂ. "ການບັງເກີດໃໝ່" ໝາຍຄວາມວ່າຢ່າງໃດ? (ຕື່ມຄວາມທີ່ຂາດ)
ການ ___________________________ ຊີວິດ __________________________

**10** ເຮົາໃຊ້ວິທີອະທິບາຍເພື່ອແກ້ຄວາມ ໝາຍຂອງຄວາມ "ບັງເກີດໃໝ່" ແລ້ວ. ແຕ່ໃນເຫດການນີ້ຍັງມີອີກບັນ ຫາໜຶ່ງທີ່ເຮົາຈະຕ້ອງອະທິບາຍຄື: ເປັນຫຍັງວ່າ ນີໂກເດມ ຊຶ່ງເປັນອາຈານໃນພວກ ຟາລິຊາຍ ບໍ່ເຂົ້າໃຈເລື່ອງການບັງເກີດໃໝ່. ເພື່ອຈະເຂົ້າໃຈເລື່ອງນີ້ ເຮົາຕ້ອງເຂົ້າໃຈເບື້ອງຫຼັງຂອງ ນີໂກເດມ. ນີໂກເດມ ຢູ່ກັບພວກໃດ ໃນ ສາສະໜາຢິວ? (ເລືອກ)

______ ຟາລິຊາຍ ______ ຊາດູກາຍ

**11** ທ່ານຈື່ບໍ່ພວກຟາລິຊາຍເຊື່ອຢ່າງໃດ? (ບໍ່ຕ້ອງຕອບ) ໃຫ້ທ່ານຂີດຂ້າອອກປະໂຫຍກໃດ ທີ່ບໍ່ຖືກກັບ ຄວາມເຊື່ອຂອງພວກເຂົາ.
ກ. ເຂົາບໍ່ເຊື່ອໃນການຄືນມາຈາກຕາຍ.
ຂ. ເຂົາເຊື່ອໃນການຄືນມາຈາກຕາຍ.
ຄ. ເຂົາພະຍາຍາມຖືພະບັນຍັດຂອງ ໂມເຊ ຢ່າງເຄັ່ງຄັດ.
ງ. ເຂົາເຊື່ອວ່າພະບັນຍັດຂອງ ໂມເຊ ບໍ່ສຳຄັນປານໃດ.
ຈ. ເຂົາເອົາຮີດຄອງປະເພນີຂອງມະນຸດເຕີ່ມໃສ່ພະຄຳພີ.
ສ. ເຂົາຕັດຄວາມອອກຈາກພະທຳ.

ຕອບ:

**7** *ອະທິບາຍ.*

**8** *ຂ. ຖືກ.*

**9** *ກ. ບໍ່.* *ຂ. ເລີ້ມຕົ້ນປ່ຽນແປງຊີວິດໃໝ່.*

**10** *ຟາລິຊາຍ.*

**11** *ຂີດຂ້າຂໍ້ ກ. ງ. ສ. ອອກ*

**12** ໃນ ໂຢຮັນ 3:3 ແລະ 3:5 ພະເຢຊູ ແລະ ນິໂກເດມ ສົນທະນາເລື່ອງການເຂົ້າໃນລາຊະແຜ່ນຂອງ ພະເຈົ້າ. ຕາມຫຼັກຄວາມເຊື່ອຂອງ ຟາລິຊາຍ ເຂົາຖືວ່າຈະເຂົ້າໄດ້ຢ່າງໃດ? ໃຫ້ໝາຍເອົາຂໍ້ທີ່ຖືກ.

ກ. ໂດຍຖືພະບັນຍັດຂອງໂມເຊ ແລະຮີດຄອງມະນຸດ.

ຂ. ໂດຍບັງເກີດໃໝ່.

ຄ. ໂດຍທຳບຸນ.

**13** ພະເຢຊູ ອະທິບາຍເລື່ອງນີ້ໂດຍແຍກສ່ວນແຕກຕ່າງລະຫວ່າງຜູ້ທີ່ເກີດມາຈາກແມ່ເທື່ອທຳອິດແລະ ຜູ້ ທີ່ບັງເກີດໃໝ່. ໃຫ້ອ່ານໂຢຮັນ 3:6 ການບັງເກີດສອງຢ່າງນັ້ນຕ່າງກັນຢ່າງໃດ?

ກ. ການບັງເກີດໃນກາຍເປັນມາຈາກ ________________________ (ຕື່ມຄວາມທີ່ຂາດ)

ຂ. ການບັງເກີດໃໝ່ເປັນມາຈາກ ພະ ________________________________________

**14** ພະເຢຊູ ຍົກຄວາມປຽບທຽບມາອະທິບາຍເລື່ອງການບັງເກີດໃໝ່ໃນ ໂຢຮັນ 3:8

ກ. ພະອົງຍົກຫຍັງມາປຽບທຽບ? __________________________________________

ຂ. ໝາຍເຖິງຫຍັງ? ____________________________________________________

**15** ກ. ມະນຸດເຮົາບັງຄັບລົມໄດ້ບໍ່? __________________________________________

ຂ. ມະນຸດເຫັນຜົນລົມພັດໃນຕົ້ນໄມ້ໄດ້ບໍ່? ___________________________________

ຄ. ມະນຸດບັງຄັບ ພະວິນຍານ ໄດ້ບໍ່? ________________________________________

ງ. ມະນຸດເຫັນຜົນພະວິນຍານໃນຊີວິດຄຼິດສະຕຽນໄດ້ບໍ່? __________________________

**16** ຜົນຂອງ ພະວິນຍານໃນຊີວິດຂອງຄົນທີ່ບັງເກີດໃໝ່ຄືຫຍັງ? (ອ່ານ ຄລຕ 5:22)

________________________________________________________________________

________________________________________________________________________

________________________________________________________________________

**17** ໃນເມື່ອທ່ານອ່ານຈາກ ຄລຕ 5:22 ນັ້ນ ທ່ານໃຊ້ວິທີປຽບທຽບມາຊ່ວຍໃນວິທີອະ_________ (ຕື່ມຄວາມ)

ຕອບ:

***12*** *ກ.*

***13*** *ກ. ແມ່.* *ຂ. ພະວິນຍານ.*

***14*** *ກ. ລົມ* *ຂ. ພະວິນຍານ*

***15*** *ກ. ບໍ່* *ຂ. ໄດ້* *ຄ. ບໍ່* *ງ. ໄດ້*

***16*** *ຄວາມຮັກ ຄວາມຍິນດີ ສັນຕິສຸກ ຄວາມອົດກັ້ນໄວ້ນານ ຄວາມປານີ ຄວາມດີ ຄວາມສັດຊື່ ຄວາມສຸພາບອ່ອນຫວານ ການຮູ້ຈັກບັງຄັບຕົວ*

***17*** *ອະທິບາຍ.*

**18** ພະເຢຊູ ຍົກຕົວຢ່າງໃດມາປຽບທຽບກັບ ພະວິນຍານໃນຊີວິດຂອງຄົນທີ່ບັງເກີດໃໝ່? ____

**19** ໃຫ້ທ່ານອ່ານໂຢຮັນ 3:6 ແລ້ວອະທິບາຍວ່າ ການບັງເກີດໃໝ່ ແລະ ການກຳເນີດຈາກຮ່າງກາຍຈະແຕກຕ່າງ ກັນຢ່າງໃດ? ________________________________________

____________________________________________________________

ຄືກັນຢ່າງໃດ? ____________________________________________________

**20** ໃນພາສາເດີມຂອງພະຄຳພີ ຄຳທີ່ແປວ່າ “ບັງເກີດໃໝ່” ມີເນື້ອຄວາມວ່າ ເກີດມາຈາກຂ້າງເທິງ. ເພາະສັນ ນັ້ນພະເຢຊູ ເວົ້າເຖິງການບັງເກີດໃໝ່ ມີເນື້ອຄວາມວ່າເກີດໃໝ່ຈາກພະ ________________________________________ (ຕື່ມຄວາມ)

**21** ການບັງເກີດໃໝ່ມາຈາກພະເຈົ້າ ໝົດສິ້ນ ບໍ່ໄດ້ຢູ່ກັບຄວາມພະຍາຍາມຂອງມະນຸດເຮົາຈັກດີ້. ດັ່ງນັ້ນທາງ ເຂົ້າແຜ່ນດິນສະຫວັນຂອງ ພະເຢຊູ ກົງກັນຂ້າມກັບຄວາມ ພະຍາຍາມຂອງ ນີໂກເດມ.

ກ. ຕາມຫຼັກຄວາມສອນຂອງ ນີໂກເດມ ເຊິ່ງເປັນຫຼັກ ຟາລີຊາຍ ຄົນໃດກໍ່ຕ້ອງຖືພະບັນຍັດຂອງ ພະເຈົ້າ ຈຶ່ງຈະ ເຂົ້າໃນລາຊະແຜ່ນດິນ ພະເຈົ້າໄດ້. ແມ່ນໃຜນຳພະບັນຍັດນັ້ນມາ?

____________________________________________________________

ຂ. ແຕ່ພະເຢຊູ ສອນວ່າຈະເຂົ້າໃນລາຊະແຜ່ນດິນຂອງພະເຈົ້າໄດ້ຢ່າງໃດ? __________

**22** ກ. ໃນຂໍ້ທີ 9 ນີໂກເດມຖາມອັນໃດທີ່ສະແດງວ່າ ເພິ່ນບໍ່ເຂົ້າໃຈເລື່ອງການບັງເກີດໃໝ່ເທື່ອ?

____________________________________________________________

ຂ. ນີໂກເດມ ຍັງຄິດເຖິງຮີດຄອງເກົ່າແກ່ທີ່ຍັງບໍ່ເຂົ້າໃຈດີ. ພະເຢຊູ ຄາດໝາຍວ່າຢ່າງໃດ? ໃຫ້ເລືອກ.

______ ນີໂກເດມ ຄົງຈະບໍ່ຮູ້ເລື່ອງການບັງເກີດໃໝ່.

______ ປະຫຼາດໃຈທີ່ນີໂກເດມບໍ່ເຂົ້າໃຈເທື່ອ.

**23** ພະເຢຊູ ຄາດໝາຍວ່ານີໂກເດມຄວນຈະເຂົ້າໃຈເລື່ອງການບັງເກີດໃໝ່. ໃນສະໄໝນັ້ນ ພະຄຳພີໃໝ່ບໍ່ໄດ້ບັນ ທຶກເທື່ອມີແຕ່ໃນພະຄຳພີເດີມ. ນີໂກເດມໃນຖານະທີ່ເປັນອາຈານຝ່າຍຟາລີຊາຍຄວນຈະຮູ້ຈັກພະຄຳພີເດີມດີໆບໍ່? ________________________________

ຕອບ:

**18** *ລົມ*

**19** *ບໍ່ມີຄຳຕອບຕາຍຕົວ ໃຫ້ປຶກສາກັບໝູ່ໃນ ປະຊຸມເທື່ອໜ້າ.*

**20** *ພະວິນຍານ ຫຼື ພະເຈາ ກໍ່ໄດ້.*

**21** *ກ. ໂມເຊ. ຂ. ໂດຍການບັງເກີດໃໝ່.*

**22** *ກ. ເຫດການເຫຼົ່ານີ້ຈະບັງເກີດຂຶ້ນໄດ້ຢ່າງໃດ*

*ຂ. ປະຫຼາດໃຈທີ່ນີໂກເດມບໍ່ເຂາໃຈເທື່ອ..*

**23** *ຄວນຮູ້*

**24** ເມື່ອເຮົາຈະກັບໄປເບິ່ງພະຄຳພີເດີມມາປຽບກັບຂໍ້ໃນພະຄຳພີໃໝ່ ເຮົາໃຊ້ສຶກສາໂດຍວິທີປຽບທຽບ. ໃຫ້ທ່ານ ອ່ານເອເຊກຽນ 18:31 ແລະ 36:26 (ຈົ່ງຕື່ມຄວາມທີ່ຂາດຕໍ່ໄປນີ້)

ກ. ຈະໃຫ້ ____________________ ໃໝ່.

ຂ. ຈະເອົາໃຈແຂງເໝືອນຫີນຂອງເຈົ້າອອກໄປແລະເອົາ ______________ ໃສ່ໃຫ້ໃໝ່.

ຄ. ຜູ້ທີ່ກ່າວຄວາມສັນຍານັ້ນຄື: ________________________________________

**25** ນີໂກເດມຄວນຈະຮູ້ຈັກພະທຳ ເອເຊກຽນ ທີ່ສອນເລື່ອງຈິດວິນຍານໃໝ່ ແລະໃຈໃໝ່ເພື່ອຄົນເຮົາຈະສາມາດມີຊີ ວິດໃໝ່. ພະເຢຊູ ສອນວ່າການນີ້ຈະເລີ້ມຕົ້ນດ້ວຍການໃດ? ________

**26** ແມ່ນດ້ວຍເຫດໃດທີ່ນີໂກເດມໃນຖານະເປັນອາຈານຝ່າຍພວກຟາລີຊາຍ ຄວນທີ່ຈະເຂົ້າໃຈຄວາມຂອງ ພະເຢຊູ ເລື່ອງການບັງເກີດໃໝ່? ______________________________

____________________________________________________________

*ເຫດການນີ້ເຮົາໃຊ້ວິທີປຽບທຽບມາຊ່ອຍວິທີ ອະທິບາຍ.*

**27** ກ. ໃນວິທີຮຽນພະຄຳພີ 4 ປະການນັ້ນ ວິທີການທີ 4 ຄືຫຍັງ? ____________________

ຂ. ວິທີການນັ້ນໃຊ້ເພື່ອຫຍັງ? ໃຫ້ເລືອກໝາຍເອົາຂໍ້ທີ່ຖືກ.

______ ເພື່ອຊອກຫາຈຸດສຳຄັນໃນຕອນພະຄຳພີໃດນຶ່ງ.

______ ເພື່ອຫາວິທີທາງປະຕິບັດຕາມຄວາມສອນໃນພະຄຳພີຂໍ້ນັ້ນ.

______ ເພື່ອອະທິບາຍຄວາມໝາຍໃນຕອນພະຄຳພີຢ່າງແຈ້ງດີ.

*ໃນຄຳຖາມທີ່ຜ່ານມາແລ້ວນີ້ ເຮົາໃຊ້ວິທີປຽບທຽບມາຊ່ອຍໃນຄຳອະທິບາຍ. ບາງເທື່ອເຮົາອາດຈະໃຊ້ວິທີປຽບທຽບມາຊ່ອຍໃນການນຳມາໃຊ້ດ້ວຍ.*

**28** ໃນຂໍ້ພະຄຳພີຕໍ່ໄປນີ້ ແມ່ນຜູ້ໃດປາກ?

ກ. ມັດທາຍ 3:1-2 ________________________________________

ຂ. ມາລະໂກ 1:14-15 ______________________________________

ຄ. ກິດຈະການ 2:38 _______________________________________

ງ. ກິດຈະການ 17:22 ແລະ 30 _________________________________

**29** ທັງ4 ຂໍ້ນັ້ນສອນວ່າຈົ່ງເຮັດຫຍັງ? ________________________________

ຕອບ:

**24** *ກ. ຈິດວິນຍານ. ຂ. ໃຈຄົນ. ຄ. ພະເຈົ້າ.*

**25** *ບັງເກີດໃໝ່.*

**26** *ເພາະເປັນສິ່ງທີ່ມີຄຳສັ່ງສອນໃນພະຄຳພີເດີມແລະ ພວກຟາລີຊາຍຮຽນແຕ່ພະຄຳພີເດີມຫຼາຍຫຼື ຄຳຄ້າຍຄືກໍ່ໄດ*

**27** *ກ.ວິທີນຳມາໃຊ້. ຂ.ເພື່ອຫາວິທີທາງປະຕິບັດຕາມຄຳສັ່ງສອນໃນພະຄຳພີ.*

**28** *ກ.ໂຢຮັນບັບຕິສະໂຕ. ຂ. ພະເຢຊູ. ຄ. ເປໂຕ. ງ. ໂປໂລ.*

**30** ຄັນທ່ານເວົ້າກັບເພື່ອນທີ່ສົນໃຈຢາກຈະເປັນຄຼິດສະຕຽນ. ທ່ານຈະບອກໃຫ້ເພິ່ນເຮັດຫຍັງກ່ອນ? ____________________________________

**31** ບາດກ້າວທຳອິດນັ້ນຄືການຖິ້ມໃຈເກົ່າເອົາໃຈໃໝ່ ແລະ ສາລະພາບບາບ. ບາດກ້າວທີສອງເດ? ໃຫ້ອ່ານຈາກ ຢຮ 3:15-16 ____________________________

**32** ຄົນທີ່ຈະມາເຊື່ອໃນພະເຢຊູຈະຜ່ານໃນບາດກ້າວສອງປະການໃດກ່ອນ? __________ ແລະ ____________________________________

*ໃຫ້ທ່ານເອງສຳນຶກຕົວເອງວ່າ ທ່ານເຄີຍບັງເກີດໃໝ່ບໍ່? ຖ້າບໍ່ແນ່ນອນເທື່ອ ໃຫ້ທ່ານຈົ່ງອ້ອນວອນຖິ້ມໃຈເກົ່າເອົາໃຈໃໝ່ດຽວນີ້ ແລ້ວວາງໃຈເຊື່ອໃນພະເຢຊູຄຼິດ ຈຶ່ງຈະບັງເກີດໃໝ່ຕາມຄວາມສັນຍາຂອງພະອົງ.*

**33** ໃຫ້ທ່ານອ່ານ ໂຢຮັນ 7:50-52 ເບິ່ງຄືວ່ານີໂກເດມຢູ່ຝ່າຍພວກລູດສິດ ພະເຢຊູ ບໍ່? _____

**34** ໃນໂຢຮັນ 19:39-40 ນີໂກເດມນັ້ນຢູ່ກັບພວກລູກສິດຂອງພະເຢຊູ ຊ່ອຍໃນການໃດ? ___

____________________________________

**35** ໃຫ້ທ່ານອ່ານຂໍ້ພະຄຳພີສາມຂໍ້ຕໍ່ໄປນີ້: 2 ກລທ 5:17  1 ປຕ 1:3, 22-23  ຓຓ 3:5
ໃຫ້ເອົາມາຂຽນໃສ່ບ່ອນວ່າງແຕ່ລະຂໍ້ໃຫ້ຖືກກັບປະໂຫຍກລຸ່ມນີ້:

ກ. ____________________ ການບັງເກີດໃໝ່ມາຈາກ ພະເຈົ້າ.

ຂ. ____________________ ພະອົງຊົງຊຳລະໃຫ້ມີໃຈບັງເກີດໃໝ່.

ຄ. ____________________ ຄົນໃນ ພະຄຼິດ ກາຍເປັນຄົນໃໝ່.

*ຖ້າສຳເລັດແລ້ວ ຄວນສອບເສັງເລີຍ*

---

**29** *ຖິ້ມໃຈເກົ່າເອົາໃຈໃໝ່.*

**30** *ຖິ້ມໃຈເກົ່າເອົາໃຈໃໝ່.*

**31** *ຈົ່ງວາງໃຈເຊື່ອໃນ ພະເຢຊູ.*

**32** *ຖິ້ມໃຈເກົ່າເອົາໃຈໃໝ່ ແລະ ສາລະພາບບາບພ້ອມກັບວາງໃຈເຊື່ອໃນ ພະເຢຊູ.*

**33** *ຢູ່.*

**34** *ຊ່ອຍຕຽມສົບ ພະເຢຊູ.*

**35** *ກ. 1 ປຕ 1:3, 22-23  ຂ. ຓຓ 3:5  ຄ. 2 ກລທ 5:17*